ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ
Tel: 071 260700 Fax: 071 260718
Website: https://www.bol.gov.la/luangprabang
BOL–LPB

# ກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍເອກະສານ ແລະ ດຳລັດວ່າດ້ວຍການເງິນ ແລະ ການບັນຊີ ຂອງ ທະນາຄານແຫ່ງ ສປປ ລາວ




ທະນາຄານ ແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ໄດ້ຈັດກອງປະຊຸມເຜີຍແຜ່ກົດຫມາຍວ່າດ້ວຍເອກະສານ ແລະ ດຳລັດວ່າດ້ວຍການເງິນ ແລະ ການບັນຊີຂຶ້ນໃນວັນທີ 18 ກຸມພາ 2022 ນີ້ ຢູ່ສະໂມສອນທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ໂດຍການເປັນປະທານຂອງ ທ່ານ ໄຊລືຊາ ຜຸຍຍະວົງ ຫົວໜ້າກົມນິຕິກຳ ທະນາຄານ ແຫ່ງ ສປປ ລາວ, ມີຄະນະກົມບັນຊີ ແລະ ການເງິນ ພ້ອມດ້ວຍ ພະນັກງານທະນາຄານແຫ່ງ ສປປ ລາວ ສາຂາພາກເຫນືອ ແຂວງຫຼວງພະບາງ, ແຂວງອຸດົມໄຊ ແລະ ແຂວງຊຽງຂວາງ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນການເຜີຍແຜ່ໃນຄັ້ງນີ້ແມ່ນລວມມີ 02 ເອກະສານຄື: ດຳລັດວ່າດ້ວຍການເງິນ ແລະ ການບັນຊີ ຂອງທະນາຄານແຫ່ງ ສປປ ລາວ ສະບັບເລກທີ 163/ລບ ນະຄອນຫຼວງວຽງຈັນ, ວັນທີ 09 ມີນາ 2021 (ເຊິ່ງດຳລັດວ່າສະບັບດັ່ງກ່າວ

ແມ່ນໄດ້ສ້າງຂຶ້ນມາປ່ຽນແທນດຳລັດວ່າດ້ວຍການບັນຊີຂອງ ທະນາຄານແຫ່ງ ສປປ ລາວ ແລະ ສະຖາບັນການເງິນ ທີ່ຂຶ້ນກັບທະນາຄານແຫ່ງ ສປປ ລາວ ສະບັບເລກທີ 03/ນຍ, ລົງວັນທີ 08 ມັງກອນ 1996) ແລະ ກົດໝາຍວ່າດ້ວຍເອກະສານ ສະບັບ ເລກທີ 69/ສພຊ ນະຄອນຫຼວງວຽງຈັນ, ວັນທີ 20 ມິຖຸນາ 2013.

ຈຸດປະສົງກໍເພື່ອສ້າງຄວາມເຂົ້າໃຈໃຫ້ແກ່ບັນດາພະນັກງານໃນຂະແໜງທະນາຄານໄດ້ມີຄວາມເປັນເອກະພາບກັນ ໃນການຮັບຮູ້, ເຂົ້າໃຈລະອຽດ, ຈະແຈ້ງ ແລະ ກຳໄດ້ກ່ຽວກັບວຽກງານການເງິນ ແລະ ການບັນຊີ ຂອງທະນາຄານ ແຫ່ງ ສປປ ລາວ ໂດຍສະເພາະແມ່ນການສ້າງແຜນງົບປະມານປະຈຳປີ, ການຮັບຮອງ, ການອະນຸມັດແຜນງົບປະມານ, ການດັດແກ້ແຜນງົບປະມານ ແລະ ເນື້ອໃນອື່ນໆຂອງດຳລັດການເງິນ ແລະ ການບັນຊີ; ນອກນັ້ນຍັງສ້າງໃຫ້ພະນັກງານໄດ້ຮັບຮູ້ ແລະ ເຂົ້າໃຈກ່ຽວກັບການນຳໃຊ້ເອກະສານ, ຕິດຕາມ-ກວດກາວຽກງານເອກະສານ, ຫລັກການ ການຮ່າງເອກະສານຕ່າງໆ.




ຂ່າວ: ບົວອອນ ວົງສະຫວ່າງ<br>ພາບ: ສຸດທິສັກ ຫວັງສະຫວັດ<br>ຮັບຜິດຊອບໂດຍ: ໜ່ວຍຊາວໜຸ່ມຮາກຖານ ທຫລ.ຫຼບ

ຮັກບ້ານເກີດເມືອງນອນ ໃຊ້ຈ່າຍທອນເປັນເງິນກີບ